# ການປົກປັກຮັກສາໜັງສືໃບລານ ຢູ່ ສ.ປ.ປ. ລາວ 4

ດາຣາ ກັນລະຍາ

## ຄວາມເປັນມາໃນອະດີດ : ຊາຕາກັມຂອງໃບລານລາວ

ວັດທະນະທັມຄວາມເຊື່ອຖືທາງສາສະໜາພຸທ ທີ່ຈາລຶກໄວ້ໃນເອກະສານບູຮານ ໄດ້ກຳນົດຮູບແບບ ແນວຄິດ ທີ່ເນັ້ນໜັກຄຸນຄ່າແຫ່ງສະຕິສັງຄົມ ຄວາມຮັກແພງສາມັກຄີຖານພີ່ນ້ອງ ແລະ ການຊ່ອຍເຫລືອກັນ ແລະກັນ ຂອງທຸກຊັ້ນຄົນໃນສັງຄົມ, ໃຫ້ມີຄວາມເມດຕາກະລຸນາ ຕໍ່ເພື່ອນມະນຸດດ້ວຍກັນ. ຈາກໜັງສືໃບລານທີ່ຮຽນອ່ານ ເທສ ໃນວັດ ກາຍມາເປັນຄວາມເຊື່ອ ແລະພາກປະຕິບັດຂອງອອກຕົນຍາດໂຍມ ແລະປະເພນີບຸນຕ່າງໆ ແຕ່ສູນກາງພະລາຊະວັງ ລົງສູ່ຊາວບ້ານໃນຊົນນະບົດຫ່າງໄກ ແລະຢູ່ນຳຊີວິດປະຈຳວັນຂອງຜູ່ຄົນຈົນເທົ້າເຖິງທຸກວັນນີ້ ເວົ້າໄດ້ວ່າ ວັດທະນະທັມອັນນີ້ໄດ້ຢັ່ງຮາກເລິກຢູ່ໃນຄວາມຜູກພັນຂອງຊາວລາວແບບຍັ່ງຍືນມາເປັນເວລາຮອດ 6-7 ສັດຕະວັດແລ້ວ. ເຖິງແມ່ນວ່າ ແມ່ຍິງ ແລະ ເດັກນ້ອຍໃນສະໄໝກ່ອນ ບໍ່ທັນໄດ້ຮຽນອ່ານໜັງສືທັມ ໜັງສືລາວ ແຕ່ກໍຟັງ ແລະ ປະຕິບັດຕາມຄຳສອນທາງທັມ ທາງໂລກ ທີ່ພະສົງ ອ່ານ/ເທສ ສູ່ຟັງນັ້ນຢ່າງເຄັ່ງຄັດ .

ແນ່ນອນ ການສູນເສັຽເອກະລາດເກືອບສອງຮ້ອຍປີ ທັງສອງສາມຄັ້ງ ຍ່ອມນຳມາຊຶ່ງຄວາມສູນເສັຽວັດທະນະທັມ ທີ່ເປັນທັງວັດຖຸ ແລະ ຈິດໃຈນີ້ ຈົນເກືອບຈະບໍ່ຫລົງເຫລືອຫຍັງເລີຍ. ທີ່ຈະແຈ້ງທີ່ສຸດ ກໍຄືວ່າເມື່ອເປັນເມືອງຂຶ້ນເພິ່ນ ຄູບາອາຈານຜູ່ສລາດຫລັກແຫລມກໍຖືກກົດໜ່ວງບໍ່ໃຫ້ເໜັງຕີງ ຫລືນຳພາໄດ້. ຊົນຊັ້ນເທິງທີ່ຍັງປົກຄອງຢູ່ແດ່ ກໍຕ້ອງແລ່ນນຳນາຍເໜືອຫົວ ເພື່ອຜົນປະໂຫຍດຂອງຕົນ ແລະ ເຊື້ອສາຍ ຫລືອາດຈະຍ້ອນຄວາມຮູ້ເທົ່າບໍ່ເຖິງການ. ແຕ່ເຖິງປານນັ້ນ ຊາວບ້ານຮາສະດອນ ກໍຍັງແມ່ນຜູ່ທີ່ບໍ່ລະບໍ່ໄລ ວັດທະນະທັມອັນດີງາມ ຍັງແມ່ນຜູ່ທີ່ປົກປັກຮັກສາເອົາໄວ້ ດ້ວຍຄວາມສັກກາຣະບູຊາ ເຖິງແມ່ນວ່າອາດບໍ່ສາມາດສຶກສາຮ່ຳຮຽນຢ່າງເລິກເຊິ່ງກໍຕາມ. ດ້ວຍເຫດນີ້ແລ້ວ ໜັງສືໃບລານຢູ່ປະເທດລາວຈຶ່ງຍັງມີໃຫ້ພວກເຮົາຣຸ່ນຄົນໃນປັດຈຸບັນ ໄດ້ເຫັນ ແລະ ຊົມໃຊ້ ມາຈົນຮອດວັນນີ້

## ການສູນເສຽດ້ານປະລິມານ

ການສູນເສຽໜັງສືໃບລານ ເກີດຂຶ້ນສອງຄັ້ງໃຫຍ່ ເມື່ອມີສົງຄາມທຳລາຍ ຈາກການຮຸກຮານຂອງສັກດີນາສະຫຍາມ ສະໄໝທີ່ນະຄອນວຽງຈັນຖືກເຜົາຈົນກ້ຽງຮາບ ມີຈຳນວນນຶ່ງທີ່ຖືກຍົກໄປ ແລະ ຈຳນວນນຶ່ງຖືກເຜົາໄປພ້ອມໆກັບ ວັດວາອາຮາມເປັນຮ້ອຍໆແຫ່ງ ໃນຕົ້ນສັດຕະວັດທີ 19

ອີກຄັ້ງນຶ່ງ ແມ່ນຖືກລະເບີດເຜົາຜານ ໃນຊຸມປີ 1963-72 ແຂວງຊຽງຂວາງ ແລະ ຫົວພັນ ເປັນຈຸດສຸມ ແລະ ແຂວງອື່ນໆອີກ ເປັນບາງສ່ວນ. ຊຽງຂວາງຊຶ່ງເຄີຍເປັນແຫລ່ງອະລິຍະທັມ ທາງການຂຽນ ຈານໜັງສືໃບລານ (ວັນນະຄະດີເລື່ອງ ທ້າວຮຸ່ງ ຫລືທ້າວເຈືອງ ທີ່ ມະຫາສິລາ ວີຣະວົງສ໌ ຄົ້ນພົບຕົ້ນສະບັບໃບລານຢູ່ຫໍສະໝຸດແຫ່ງຊາດປະເທດໄທ ແມ່ນກ່າຍມາຈາກບ້ານບານ ຊຽງຂວາງ) ເວລານີ້ ທົ່ວແຂວງຊຽງຂວາງສຳຫລວດໜັງສືໃບລານໄດ້ແຕ່ 3.880 ຜູກ ຈາກວັດ 98 ແຫ່ງ, ສະເລັ່ຽວັດນຶ່ງໆ ມີໜັງສືແຕ່ 40 ຜູກ ສ່ວນໃຫຍ່ກໍເປັນໜັງສືກ່າຍໃໝ່ໆ ໃນຂະນະດຽວກັນ ຢູ່ບ່ອນທີ່ບໍ່ມີໃຜມາທຳລາຍປຸ້ນສະດົມ ໜັງສື ໃບລານຕາມວັດຕ່າງໆຈະມີສະຖິຕິສູງຮອດ 2.000 ເຖິງ 4.000 ກວ່າຜູກ ຕໍ່ວັດ ດັ່ງເຊັ່ນ ເມືອງຫລວງພະບາງ ເປັນຕົ້ນ

ການສູນເສຽທັງສອງຄັ້ງທີ່ກ່າວມາ ແມ່ນການສູນເສັຽດ້ານວັດຖຸພາບ ແລະ ປະລິມານທີ່ມາຈາກພາວະວິໄສ ສ່ວນການສູນເສຽທີ່ໃຫຍ່ຫລວງກວ່ານີ້ ຍັງແມ່ນເສັຽດ້ານຄ່ານິຍົມ ແລະ ຄຸນນະພາບ ໃນເມື່ອບໍ່ມີການນຳໃຊ້ເພື່ອສຶກສາຮ່ຳຮຽນ ລະເຫລີງ ບໍ່ຫົວຊາ ບໍ່ເຫັນຄວາມສຳຄັນ ເຫີ່ເຫີມນຳອັນໃໝ່ ຊຶ່ງອັນນີ້ເກີດຈາກພາຍໃນເຮົາເອງ, ຕົວເຮົາເອງເປັນຕົ້ນເຫດ ນະທີ່ນີ້ ເມື່ອເວົ້າເຖິງການສູນເສັຽໄປແລ້ວ ຂ້າພະເຈົ້າຈະກ່າວເຖິງການກອບກູ້ ແລະ ປົກປັກຮັກສາ

## ການກອບກູ້ ແລະ ອຸປະສັກ

1928-40 ຊຸມປີແຫ່ງການຟື້ນຟູວັດທະນະທັມ: ພຸທະບັນດິດສະພາຈັນທະບູລີ

ປະຊາຊົນລາວໂຊກດີ ທີ່ມີຜູ້ຄຶດນຳການກອບກູ້ໜັງສືໃບລານເກົ່າແກ່ ເຖິງສອງຍຸກສະໄໝແລ້ວ. ຍຸກທີນຶ່ງຊຸມປີ 1928-40 ເມື່ອມີການຈັດຕັ້ງພຸທະບັນດິດສະພາຈັນທະບູລີຂຶ້ນ ໂດຍພະດຳລິຂອງສົມເດັດ ເຈົ້າເພັດຊະຣາຊ ແລະ ບັນດານັກປາດອາຈານຊາວຝຣັ່ງ ກໍສົນໃຈຄົ້ນຄວ້າຂຶ້ນບັນຊີໄວ້ໃນຄາວນັ້ນ ສາມາດກອບກູ້ທັງດ້ານຄຸນນະພາບ ແລະປະລິມານ ກ່າວຄື ໄດ້ຈັດຕັ້ງໂຮງຮຽນປາລີຂຶ້ນທົ່ວປະເທດ ຈັດຕັ້ງການເຝິກອົບຮົມລະຍະສັ້ນໃຫ້ແກ່ພະສົງ ແລ້ວມີການຈົດກ່າຍໜັງສືໃບລານ ບູລະນະວັດວາອາຮາມຢ່າງເປັນຂະບວນສຳຄັນ. (ເມື່ອເດີນ

ທາງລົງໄປສຳຫລວດໜັງສືໃບລານໃນທຸກໆແຂວງ ແຕ່ 1989-2002 ມານີ້ ພວກເຮົາຍັງເຫັນຮ່ອງຮອຍຂອງການຟື້ນຟູວັດທະນະທັມ ການຮຽນ ການສອນທາງທັມ ຫລົງເຫລືອຢູ່ທຸກໆແຫ່ງ ນັບແຕ່ຜົ້ງສາລີ ລົງຮອດເມືອງໂຂງຈຳປາສັກ: ໂຮງຮຽນປະຣິຍັດຕິທັມ, ໜັງສືໃບລານທີ່ຈານຂຶ້ນໃນໄລຍະນັ້ນ, ການສ້າງສາບູລະນະວັດວາອາຮາມ ໂດຍພະສົງທີ່ເຄີຍໄປຮຽນຢູ່ **"ວັດຈັນ"**[1] ຄາວນັ້ນ).

ແຕ່ແລ້ວ ພາຍຫລັງສົງຄາມໂລກຄັ້ງທີສອງມານີ້ ທ່າມກາງເຫດການການເມືອງ ການຕໍ່ສູ້ອັນຂ້ຽວຂາດ ເພື່ອເອກະລາດອັນຄົບຖ້ວນຂອງຊາດ ໃນບ່ອນທີ່ມີຄວາມສະຫງົບ ຊ້ຳຜັດຟ້າວຟັ່ງຮັບເອົາຄວາມທັນສະໄໝ ວັດທະນະທັມໃໝ່ເຂົ້າມາຢ່າງບໍ່ເລືອກ. ເປັນເວລາກວ່າ 40 ປີ ທີ່ຊາວບ້ານ ແລະພະສົງ ໄດ້ປະລະການຊົມໃຊ້ໜັງສືໃບລານໄປຫລາຍ ເວົ້າໄດ້ວ່າ ບາງບ່ອນກໍບໍ່ໃຊ້ເລີຍ ບາງບ່ອນກໍໃຊ້ພໍແຕ່ເປັນຮີດເປັນຄອງ. ລະບົບການສຶກສາຂອງພະສົງ ຫັນໄປສູ່ທາງໂລກອ້ອຍຕ້ອຍ. ໜັງສືໃບລານຈຳນວນນັບເປັນຫລາຍໆແສນຜູກ ຖືກປະໄວ້ຕາມຍະຖາກັມ ຫລາຍວັດຍອມຮັບວ່າ ບໍ່ໄດ້ໄຂຕູ້ໃບລານເປັນເວລາ 30-40 ປີແລ້ວ. ມີການຈູດເຜົາພ້ອມພະອາຈານຜູ່ນິພພານໄປ ຕາມຄວາມເຊື່ອງົມງວາຍ, ປ່ອຍໃຫ້ປວກກິນ ຝົນຮົ່ວໃສ່ ນັບເປັນຮ້ອຍໆຕູ້ ບໍ່ມີການຮ່ຳຮຽນຢ່າງຕັ້ງໜ້າ ແຕ່ຜັດຍັງຕ້ອງການເຜີຍແຜ່ສາສະໜາພຸທ ຊາວບ້ານກໍຍັງຢາກຟັງເທສຟັງທັມ. ທຳນຽມໃໝ່ຂອງສົງ ກໍເລີຍນິຍົມກ່າຍ ຄັດລອກຈາກໃບລານ ຊຶ່ງເປັນຕົວທັມ ຫລືຈາກໜັງສືຕົວໄທມາເປັນຕົວລາວປັດຈຸບັນ ຫລືຊ້ຳຮ້າຍ ເອົາໜັງສືໄທມາເທສເປັນສຽງປົ່ນໄທໄປເລີຍ ຊຶ່ງໜັງສືທັມມະຈຳນວນນຶ່ງ ທີ່ຈັດພິມເປັນຕົວໜັງສືໄທ ກໍແມ່ນລິຈະນາຈາກໃບລານລາວນັ້ນເອງ. ຖືວ່າເປັນການສູນເສຽດ້ານຄ່ານິຍົມ ແລະ ຄຸນນະພາບໄປໃນຕົວ

## ແນວທາງວັດທະນະທັມ ຂອງລັດຖະບານ ສ.ປ.ປ. ລາວ ກັບໜັງສືໃບລານ

ມາຮອດປີ 1988 ໂຊກດີຄັ້ງທີສອງ ຍ້ອນວ່າລັດຖະບານ ມີແນວທາງດ້ານວັດທະນະທັມທີ່ສອດຄ່ອງກັບຈິດໃຈປະຊາຊົນ ແລະ ໄປນຳແນວທາງລວມຂອງໂລກ ຊຶ່ງພົບພໍ້ລວມສູນ ແລະ ຮູ້ຈັກຊຶ່ງກັນ ແລະກັນ ຢູ່ໃນວົງການວຽກງານຂອງອຸຍແນສໂກ. ຜູ່ຕາງໜ້າມູນນິທິໂຕໂຍຕາ ແຫ່ງປະເທດຍີ່ປຸ່ນ ໄດ້ເດີນທາງມາພົບພໍ້ເຈລະຈາກັນ (ໃນເວລານັ້ນແມ່ນ ທ່ານຫຸມພັນ ລັດຕະນະວົງ ເປັນຫົວໜ້າກຳມາທິການອຸຍແນສໂກ ຝ່າຍວັດທະນະທັມ ແລະ ຂ້າພະເຈົ້າ ກໍຢູ່ໃນຄະນະ ທັງເປັນເລຂານຸການ). ກະຊວງວັດທະນະທັມ ຈຶ່ງຕົກລົງໃຈດຳເນີນວຽກງານອະນຸລັກໜັງສືໃບລານ ໄປຕາມຂັ້ນຕອນທີ່ເໝາະສົມ ຄືເບື້ອງຕົ້ນ ຈັດສຳມະນາທົ່ວປະເທດ

---

[1] ຈາກການສຳພາດ ຜູ່ເຖົ້າ ອາຍຸ 92 ປີ ຢູ່ບ້ານນາກຸງ ຫາດກ້ຽງ ປີ 1993.

ໂດຍມີ ສ.ດຣ. Yoneo Ishii ທີ່ປຶກສາກິຕິມະສັກຂອງ ມູນນິທິໂຕໂຢຕາ ມາເປັນວິທະຍາກອນ ໃຫ້ຄວາມຮູ້ເບື້ອງຕົ້ນ ອັນເປັນສິ່ງກະຕຸ້ນໃຫ້ກະຊວງ ແລະນັກວິຊາການພວກເຮົາ ມີຈິດໃຈຢາກດໍາເນີນການອະນຸລັກຄັ້ງນັ້ນ

ພາຍຫລັງການສໍາມະນາທົ່ວປະເທດ ຄັ້ງວັນທີ 10-13 ມີນາ 1988 ແລ້ວ ກະຊວງກໍໄດ້ແຕ່ງຕັ້ງຄະນະກໍາມະການຮັບຜິດຊອບວຽກງານຂຶ້ນບັນຊີໃບລານ ໃນ 3 ແຂວງສໍາຄັນ ຄື ວຽງຈັນ, ຫລວງພະບາງ ແລະ ກໍາແພງນະຄອນ ເພື່ອດໍາເນີນງານ ແຕ່ທ້າຍປີ 1988 ເຖິງ 1991. ຈາກນັ້ນ ກໍສະເໜີທາງມູນນິທິໂຕໂຢຕາ ສືບຕໍ່ອີກ 3 ປີ ຄື 1991-1994 ໃນ 3 ແຂວງ: ຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ ແລະ ຍັງເພີ່ມການສໍາຫລວດບາງວັດ ໃຫ້ແຂວງບໍລິຄໍາໄຊນໍາອີກ

## ອຸປະສັກ ແລະ ຜົນສໍາເລັດ

ການດໍາເນີນໂຄງການໃນສະໄໝນັ້ນ ແມ່ນພົບພໍ້ກັບອຸປະສັກຫລາຍຢ່າງ ຄື: ການຂຶ້ນບັນຊີເອກະສານເກົ່າແກ່ນັບວ່າເປັນວຽກໃໝ່ທີ່ພວກເຮົາບໍ່ເຄີຍມີຄວາມຮູ້ມາກ່ອນ (ໄດ້ເຊີນ ທ່ານ ຣ.ສ. ສົມຫມາຍ ເປຣມຈິດ ຜູ້ຊ່ຽວຊານດ້ານການອະນຸລັກຄໍາພີໃບລານລ້ານນາ ມະຫາວິທະຍາໄລຊຽງໃໝ່ ປະເທດໄທ ມາເປັນທີ່ປຶກສາຕະຫລອດເວລາ 3 ປີທໍາອິດ ຝ່າຍລາວ ກໍມີນັກຄົ້ນຄວ້າອາວຸໂສ ຄື ທ່ານອາຈານ ມະຫາສໍາລິດ ບົວສີສະຫວັດ ເປັນທີ່ປຶກສາ) ວິທີວິທະຍາໃນການສໍາຫລວດຍັງບໍ່ສອດຄ່ອງ ແລະ ຮອບດ້ານ ຄວາມເຂົ້າໃຈຂອງປະຊາຊົນຍັງຫວງແຫນ ແລະ ສັກກາຣະຕໍ່ໜັງສືໃບລານ ຫລືຍັງເຊື່ອງອໍາໄວ້ (ເອົາໃຫ້ເບິ່ງແຕ່ອັນໃໝ່ ເພາະຄຶດວ່າໃບລານໃໝ່ ງາມ ແລະ ຄົບຖ້ວນດີ ແມ່ນສິ່ງທີ່ເຮົາຕ້ອງເອົາໃຈໃສ່)

- ການເດີນທາງໄປມາຍາກລໍາບາກ ບໍ່ມີພາຫະນະ ມີແຕ່ອີ່ລົດຈັກເດີນທາງ 70-80 ກິໂລແມັດ, ລົດໂດຍສານກໍຍັງບໍ່ຫລາຍ; ການສໍາຫລວດເຮັດໄດ້ແຕ່ຍາມແລ້ງ ບໍ່ເຕັມເວລາ

- ທາງສຽງໃນຖັນແຖວພະນັກງານ ເວລານັ້ນຍັງ ເຫັນໜັງສືໃບລານ ເປັນຂອງຫລ້າສະໄໝ, ບໍ່ມີວິທະຍາສາດ ເຫັນວ່າ ບໍ່ແມ່ນວັດທະນະທັມອັນຍອດຍິ່ງຂອງຊາດ, ຄືຍັງມີຄວາມສົງໄສຢູ່ຫລາຍ

ແຕ່ກະຊວງວັດທະນະທັມ ພາຍໃຕ້ການນໍາພາຂອງ ທ່ານ ທອງສິງ ທໍາມະວົງ ລັດຖະມົນຕີກະຊວງວັດທະນະທັມ ໃນເວລານັ້ນ ໂດຍໄດ້ຮັບການຊີ້ນໍາຈາກ ທ່ານ ພູມີ ວົງວິຈິດ ກົມການເມືອງ ໄດ້ຕັດສິນໃຈທີ່ຈະໃຫ້ວຽກງານນີ້ບັນລຸຜົນສໍາເລັດໃຫ້ໄດ້ ຍ້ອນເຊື່ອໝັ້ນວ່າ ການຕໍ່ສູ້ໃຫ້ເຮົາຫລຸດພົ້ນຈາກອິດທິພົນວັດທະນະທັມ

ຊາດອື່ນ ທີ່ຄອບງຳເຮົາມາຫລາຍທົສວັດນັ້ນ ໜັງສືໃບລານທີ່ມີເນື້ອໃນທາງສາລະບັນເທີງ ແລະ ຄຳສອນອັນຫລາກຫລາຍ ຈະຊ່ອຍຟື້ນຟູຄວາມຮູ້ ພູມປັນຍາອັນເກົ່າແກ່ ຄືນມາສູ່ສັງຄົມລາວ ໃຫ້ມໍລະດົກອັນຊົງຄຸນຄ່ານີ້ ໄດ້ມີບົດບາດຄືນມາອີກ. ເມື່ອດຳເນີນມາຮອດປີ 1992 ຂັ້ນເທິງໄດ້ຫລິງເຫັນວ່າ ວຽກງານນີ້ໄດ້ຊ່ອຍສືບສານຄວາມເຂົ້າໃຈຂອງປະຊາຊົນຢູ່ທ້ອງຖິ່ນຕ່າງໆ ຢ່າງເປັນຜົນດີ

ໂຄງການຂຶ້ນບັນຊີໜັງສືຜູກໃບລານ ທີ່ມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ ໄດ້ຂານຕອບ ແລະ ສະໜັບສະໜູນຢູ່ 6 ປີນັ້ນ ໄດ້ບັນລຸຜົນຕາມຄາດຫມາຍ ສາມາດລົງໄປສຳຫລວດຂຶ້ນບັນຊີ ເຮັດອະນາໄມຫຸ້ມຫໍ່ມັ້ຽນມັດ ສຳເລັດບໍລິບູນຢູ່ໃນ 252 ວັດ ລວມມີໜັງສືໃບລານ 127.636 ຜູກ. ນີ້ແມ່ນຜົນຂອງການອອກແຮງງານທີ່ຂະຫຍັນອັນແຂງ ມີຄວາມຮັບຜິດຊອບຂອງຄະນະໂຄງການໃບລານ, ການເຮັດວຽກທີ່ຫ້າວຫັນເອົາການເອົາງານ ຂອງບັນດານັກວິຊາການ ການຮ່ວມໄມ້ຮ່ວມມືອັນຕັ້ງໜ້າ ຂອງອຳນາດການປົກຄອງທ້ອງຖິ່ນ ພະສົງສາມະເນນ ແລະ ປະຊາຊົນທຸກຊັ້ນຄົນ ດ້ວຍຄວາມຕື່ນຕົວສະໝັກໃຈ ແລະ ເຫລື້ອມໃສໃຈສັດທາອັນແທ້ຈິງ. ແມ່ນແຕ່ທ່ານຮອງລັດຖະມົນຕີເອງ ຄື ທ່ານ ບົວບານ ວໍຣະຂຸນ ກໍໄດ້ລົງໄປຢ້ຽມຢາມ ແລະ ກວດກາວຽກງານຢູ່ໃນທ້ອງຖິ່ນຈຳນວນນຶ່ງ ເປັນຕົ້ນແມ່ນ ແຂວງບໍລິຄຳໄຊ ແລະ ຄຳມ່ວນ ໄດ້ເຫັນກັບຕາ ພວກຜູ່ເຖົ້າຜູ່ແກ່ ແນວໂຮມ ບ່າວສາວ ລູກຫລານທຸກເພດໄວ ໄດ້ພາກັນລົງວັດ ເພື່ອຮ່ວມເຮັດອະນາໄມ ເຊັດຖູໜັງສືຜູກໃບລານ ບາງຄົນກໍເອົາຜ້າຫໍ່ໜັງສືເກົ່າໄປຊັກ ບາງຄົນກໍນຳເອົາຜ້າໃໝ່ຂອງຕົນມາໂມທະນາ ເປັນຜ້າຫໍ່ໜັງສື ບາງຄົນກໍອອກເງິນຈະຕຸປັດໄຈໄທຍະທານ ປະກອບສ່ວນເຂົ້າໃນການອະນຸລັກໜັງສືຜູກໃບລານ ແລະ ໃນຍາມກາງຄືນ ກໍພາກັນແຫ່ໜັງສືອ້ອມສາລາໂຮງທັມ ເຮັດໃຫ້ບັນຍາກາດຄືກັບປາງບຸນໃຫຍ່. ຄົງເປັນຄັ້ງທຳອິດໃນປະຫວັດສາດ ການເຮັດວຽກຕຳແໜ່ງຮອງລັດຖະມົນຕີຂອງທ່ານ ທີ່ໄດ້ນັ່ງຢູ່ກາງສາລາວັດ ເພື່ອກ່າວຄຳປາໄສ ແລະ ໂອ້ລົມນຳພະສົງ ເຖົ້າແກ່ແນວໂຮມ. ຢູ່ທຸກແຫ່ງ ທີ່ພວກເຮົາລົງໄປພົບພໍ້ ໂອ້ລົມກັບປະຊາຊົນ ແມ່ນມີການຢັ້ງຢືນຢ່າງໜັກແໜ້ນນຳກັນວ່າ ໜັງສືໃບລານ ທັງເປັນຫລັກຖານທາງປະຫວັດສາດ ທັງແມ່ນໝາກຫົວໃຈຂອງວັດທະນະທັມຊາດ ຢັ້ງຢືນເຖິງຄວາມສີວິໄລ ອັນເກົ່າແກ່ຂອງຊາດໄດ້

ຜົນສຳເລັດຄືດັ່ງກ່າວ ແມ່ນປັດໄຈສຳຄັນທີ່ຈະຕ້ອງໄດ້ອ້າງເຖິງ ຄືການໃຫ້ການຊ່ວຍເຫລືອດ້ວຍກ້ອນເງິນເປັນຈຳນວນຫລວງຫລາຍ ຂອງມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ ທີ່ເປັນເຈົ້າສັດທາໃນໂຄງການນີ້ ແລະ ເປັນແຮງໃຈໃຫ້ບັນດານັກວິຊາການ ມີເງື່ອນໄຂປະຕິບັດໂຄງການນີ້ ສຳເລັດລຸລ່ວງໄປໂດຍດີທຸກປະການ. ຜົນສຳເລັດຂອງໂຄງການຂຶ້ນບັນຊີໜັງສືຜູກໃບລານລາວ ໂດຍມູນນິທິໂຕໂຢຕາ ເປັນຜູ່ອຸປະຖຳທາງ

ດ້ານການເງິນນັ້ນ ໄດ້ປູພື້ນໃຫ້ປະຊາຊົນ ແລະ ພະສົງສາມະເນນ ໃນແຕ່ລະທ້ອງຖິ່ນ ຄ່ອຍໆມີສະຕິ ມີຄວາມເຂົ້າໃຈ ແລະ ຢູ່ຫລາຍແຫ່ງກໍມ້ຽນມັດໜັງສືໃບລານໂດຍຕົນເອງໄດ້ດີຂຶ້ນ. ຖືວ່າ ມາໃນລະຍະນີ້ ໜັງສືໃບລານເຮົາ ກໍໄດ້ຮັບການອະນຸລັກຮັກສາໄວ້ອີກວາລະນຶ່ງ

## 1992 - 2002 ໂຄງການປົກປັກຮັກສາໜັງສືໃບລານລາວ (ການຮ່ວມມື ລາວ - ເຢຍຣະມັນ)

ໃນກອງປະຊຸມສະຫລຸບຖອດຖອນບົດຮຽນ ໃນທ້າຍປີ 1991 ນັ້ນ ເກີດມີທາງສຽງສະໜັບສະໜູນຫລາຍຂຶ້ນຮຽກຮ້ອງຢາກໃຫ້ການຂຶ້ນບັນຊີ ໄດ້ກວມໄປທົ່ວທຸກໆວັດ ໃນທຸກໆແຂວງ. ໃນປີດຽວກັນ ພວກຂ້າພະເຈົ້າຄະນະໂຄງການ ແລະ ການນຳໃນກະຊວງຈຳນວນນຶ່ງ ໄດ້ເດີນທາງໄປທັສນະສຶກສາ ຖອດຖອນບົດຮຽນຢູ່ຊຽງໃໝ່ ແລະ ບັນດາຈັງຫວັດພາກເໜືອ ຂອງຣາຊະອານາຈັກໄທ ໄດ້ເຫັນວຽກງານທີ່ສູນສົ່ງເສີມວັດທະນະທັມ ດຳເນີນການສຳຫລວດ ແລະອະນຸລັກຄຳພີໃບລານລ້ານນາ ໃນ 8 ຈັງຫວັດ ພ້ອມການຖ່າຍໄມໂຄຼຟີມທີ່ເປັນວຽກສຳຄັນຕ້ອງການທຶນຮອນຫລາຍ. ໂດຍການແນະນຳຂອງ ອາຈານ ດຣ. ໜ່ອມຣາຊະວົງ ຣຸຈະຢາອາພາກອນ ຫົວໜ້າໂຄງການ, ພວກເຮົາໄດ້ແລກປ່ຽນກັບ ສາສະດາຈານ ດຣ. ຮະຣັນ ຮຸນດິອຸສ (ຊ່ຽວຊານເຢຍຣະມັນ ປະຈຳໂຄງການ) ເຖິງຄວາມເປັນໄປໄດ້ທີ່ຈະຂໍການຊ່ວຍເຫລືອຈາກ ລັດຖະບານ ສ.ສ. ເຢຍຣະມັນ, ຊຶ່ງກໍເປັນຄວາມກະລຸນາຢ່າງສູງ ທີ່ ລັດຖະບານ ສ.ສ. ເຢຍຣະມັນ ໄດ້ຕອບສະໜອງຂໍ້ສະເໜີໂຄງການ 10 ປີ ຂອງພວກເຮົາ ທີ່ຍື່ນເຖິງເພິ່ນ ໃນຕົ້ນປີ 1992, ໂຄງການນີ້ມີຊື່ວ່າ ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມື ລາວ-ເຢຍຣະມັນ ໄດ້ເລີ່ມປະຕິບັດມາແຕ່ເດືອນ 9/1992 ເປັນຕົ້ນມາຈົນຮອດ ເດືອນ 9/2002

ໃນດ້ານນະໂຍບາຍຫລັກ ໂຄງການນີ້ ໄດ້ພັດທະນາວຽກງານເກົ່າທີ່ເຮັດມາກ່ອນ ໃຫ້ມີຂັ້ນຕອນ ແລະວິທີການເພີ່ມຂຶ້ນ ຄື :

1. ການປົກປັກຮັກສາດ້ານວັດຖຸພາບຂອງໃບລານ ແມ່ນເຮັດລະອຽດ ມີການປັດຝຸ່ນ ແລະເຊັດດ້ວຍເຫລົ້າ 90 ປ່ຽນສາຍສະໜອງ ໃສ່ໄມ້ປະກັບ ຫໍ່ຜ້າຂາວ ແທນຜ້າທີ່ເກົ່າເປື່ອຍແລ້ວ
2. ການສຳຫລວດເກັບກຳຂໍ້ມູນ ຂຶ້ນບັນຊີ ແລ້ວສ້າງຄັງຂໍ້ມູນ ໃນລະບົບທີ່ທັນສະໄໝ ສ້າງເປັນບັນຊີຫລວງ

3. ສ້າງສະຕິຕື່ນຕົວ ແລະປຸກລະດົມການປະກອບສ່ວນຂອງມວນຊົນ ໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈຄຸນຄ່າອັນສູງສົ່ງຂອງໜັງສືໃບລານ ທັງໃນແງ່ຄວາມໝາຍທາງປະຫວັດສາດ ສາສະໜາ ສິລະປະວັນນະກຳ ແລະ ອື່ນໆ ໂດຍຈັດກອງປະຊຸມໃຫຍ່ຢູ່ແຕ່ລະແຂວງ, ອອກຂ່າວທາງ ວິທະຍຸ ໜັງສືພິມ ທັງໃຫ້ປະຊາຊົນເຂົ້າຮ່ວມໃນວຽກງານອະນຸລັກຢູ່ທ້ອງຖິ່ນຂອງຕົນ

4. ມີການຖ່າຍໄມໂຄຼຟິມ ເອກະສານທີ່ເກົ່າແກ່ ມີໜ້ອຍ ສຳຄັນ ສະເລັ່ຽແລ້ວປະມານ 15-20% ຂອງເອກະສານທີ່ໄດ້ສຳຫລວດທັງໝົດແລ້ວ (ໃບລານສຳຫລວດແລ້ວ 376.000 ຜູກ ໄດ້ຖ່າຍໄມໂຄຼຟິມແລ້ວ 54.000 ຜູກ)

5. ດ້ານການໂຄສະນາເຜີຍແຜ່ ມາຮອດບັ້ນນີ້ ວິທີການທີ່ຈະລົງຫາປະຊາຊົນຢູ່ທ້ອງຖິ່ນ ກໍໄດ້ມີຄວາມລະອຽດອ່ອນຕື່ມ ຄືມີການປະຊາສຳພັນຫລາຍຂຶ້ນ ແລະ ດຶງດູດເອົາການນຳຢູ່ທ້ອງຖິ່ນເຂົ້າຮ່ວມ ຢ່າງໜ້ອຍໃນກອງປະຊຸມລະດັບແຂວງ (ຊຶ່ງເປັນການຊີ້ແຈງຕໍ່ມວນຊົນ ກ່ອນລົງເຮັດວຽກ) ນອກຈາກ ຜະແນກຖະແຫລງຂ່າວ ແລະ ວັດທະນະທັມເມືອງ ແນວລາວສ້າງຊາດ ແລະ ພະສົງ ທີ່ເປັນເປົ້າໝາຍຫລັກແລ້ວ ໄດ້ເຊີນເອົາອຳນາດການປົກຄອງຂັ້ນເມືອງມາຮ່ວມ. ການເຊີນຊວນໃຫ້ປະຊາຊົນມີສ່ວນຮ່ວມ ກໍແມ່ນກິດຈະກຳນຶ່ງທີ່ຟຶດຟື້ນ ມອບໃຫ້ເປັນຫົວຄິດປະດິດສ້າງຂອງທ້ອງຖິ່ນເອງ ຊຶ່ງບາງຄັ້ງກໍແນໃສ່ນັກຮຽນມັດທະຍົມຕົ້ນ ມັດທະຍົມປາຍ, ສະມາຄົມແມ່ຍິງບ້ານ ບາງແຫ່ງກໍແມ່ນສາມະເນນ ເປັນກຳລັງແຮງ

6. ໃນດ້ານການຈັດພິມອອກເຜີຍແຜ່ ໂຄງການໄດ້ສົ່ງເສີມໃຫ້ນັກຄົ້ນຄວ້າຜູ່ໜຸ່ມນ້ອຍ ນຳເອົາບົດເລື່ອງອິງທັມມະ ຫລື ວັນນະຄະດີ ກາບກອນທີ່ເກົ່າແກ່ ເພື່ອຈັດພິມອອກແຈກຢາຍ ໄດ້ຈຳນວນ 8 ຫົວເລື່ອງ ໄດ້ລິເລີ່ມໃຫ້ມີການລິດຈະນາ ແລະຈັດພິມໜັງສືທີ່ເປັນກົດໝາຍບູຮານ ເຊັ່ນ ເລື່ອງມູນລະຕັນໄຕ ໂດຍແມ່ນ ທ່ານອາຈານ ມະຫາສຳລິດ ບົວສີສະຫວັດ ເປັນຜູ່ກວດທານຈາກຕົ້ນສະບັບເກົ່າ ທີ່ໄດ້ລິດຈະນາໄວ້ຫລາຍສິບປີມາແລ້ວ ແລະ ເປັນໜັງສືທີ່ທ່ານ ອາຈານມະຫາສິລາ ວີຣະວົງສ໌ ໄດ້ຊີ້ແຈງໃຫ້ເຫັນຄວາມສຳຄັນຂອງເນື້ອໃນເລື່ອງດັ່ງກ່າວ ມາເປັນເວລາຫລາຍສິບປີ ແຕ່ບໍ່ທັນໄດ້ຈັດພິມຈັກເທື່ອ. ເມື່ອເຫັນວ່າ ໜັງສືປະເພດນີ້ເປັນທີ່ສົນໃຈ ຂອງຜູ່ອ່ານທົ່ວໄປ ທ່ານອາຈານສຳລິດ ກໍໄດ້ສືບຕໍ່ລິດຈະນາ ສ້າງເປັນໂຄງການໃໝ່ຕ່າງຫາກ ເພື່ອຈັດພິມ ໂດຍທຶນສະໜັບສະໜູນຈາກມູນນິທິໂຕໂຢຕາ ເປັນເວລາຫົກປີເຕັມ ກໍໄດ້ປຶ້ມອອກມາໃຫ້ໄດ້ອ່ານກັນເປັນຊຸດກ່ຽວກັບກົດໝາຍບູຮານ ຕັ້ງ 6 ເລື່ອງນຳກັນ. ນອກຈາກນີ້ ໂຄງການພວກເຮົາໄດ້ຈັດພິມຂ່າວ

ໃບລານລາຍໄຕມາດ ຊຶ່ງປະກອບດ້ວຍ ຂ່າວຄາວຈາກທ້ອງຖິ່ນຕ່າງໆ ທີ່ມີການສຳຫລວດ ແລະ ຖ່າຍໄມໂຄຼຟິມ ພ້ອມທັງບົດສັ້ນໆ ລຶດຈະນາຈາກໃບລານ ທີ່ໜ່ວຍສຳຫລວດໄດ້ພົບພໍ້ໃນເວລາລົງເຮັດວຽກຢູ່ທ້ອງຖິ່ນ. "**ຂ່າວໃບລານ**" ນັບວ່າເປັນສິ່ງກະຕຸກຊຸກຍູ້ ໃຫ້ແຕ່ລະທ້ອງຖິ່ນເກີດຄວາມພາກພູມໃຈ ແລະ ເອກອ້າງ ໃນຈຳນວນໜັງສືທີ່ຂະເຈົ້າມີ ແລະ ພ້ອມໃຈກັນຮັກສາໃຫ້ດີຂຶ້ນ

7. ເພື່ອສົ່ງເສີມການສຶກສາຂອງພະສົງ ແລະນັກສຶກສາ ໃນມະຫາວິທະຍາໄລແຫ່ງຊາດ ທາງໂຄງການ ໄດ້ໃຫ້ທຶນແກ່ພາກສ່ວນທັງສອງ ເພື່ອສ້າງຂະບວນການຮຽນ ການສອນໂຕທັມ, ໄວຍະກອນປາລີ ແລະ ວັນນະຄະດີເກົ່າແກ່ ໃຫ້ຫລາຍຂຶ້ນ ແຕ່ປີເລີ່ມຕົ້ນໂຄງການ (ສະເພາະພະສົງ ແມ່ນໄດ້ຈັດທຶນໃຫ້ທຸກໆແຂວງ ສະເພາະແຂວງຫລວງພະບາງ ໄດ້ຮັບທຶນ ຮອດ 3 ປີ)

## ຖອດຖອນບົດຮຽນ

ຈາກການເຮັດວຽກຕົວຈິງຢູ່ພື້ນຖານ ພວກເຮົາມັກຈະພົບເຫັນວ່າ ຍາມໃດມີການສ້າງສາພັດທະນາບ້ານເມືອງ ມັກມີຜົນກະທົບໄປສູ່ການມ້າງເພທຳລາຍວັດທະນະທັມເກົ່າແກ່ ຕົວຢ່າງ: ຢູ່ຫລວງພະບາງ ວັດໃໝ່ສຸວັນນະພູມມາຣາມ ເອີ້ນຕາມຊື່ເກົ່າ ແມ່ນວັດປ່າຂາມ ເປັນວັດທີ່ມີອາຍຸເກົ່າແກ່ຫລາຍຮ້ອຍປີ ເຄີຍມີຫໍໄຕບູຮານ ທີ່ຂຶ້ນຊື່ລືຊາດ້ານສະຖາປັດຕະຍະກຳ. ສະໄໝທີ່ອຳນາດການປົກຄອງຝຣັ່ງ ລົງມືສ້າງຕົວເມືອງຫລວງພະບາງ ໃນຕົ້ນສັດຕະວັດ ທີ 20 ນັ້ນ ເພິ່ນໄດ້ມ້າງຫໍໄຕບູຮານຖິ້ມ ເພື່ອເອົາທີ່ດິນຕັດຖະໜົນເສັ້ນກາງຕໍ່ໜ້າພຣະຣາຊະວັງ. ໝາຍຄວາມວ່າ ຫໍໄຕບູຮານໄດ້ສູນຫາຍໄປ ມີຖະໜົນເຂົ້າມາແທນທີ່. ຫໍໄຕຫລັງໃໝ່ທີ່ພວກເຮົາເຫັນທຸກວັນນີ້ ໄດ້ສ້າງຂຶ້ນໃນຊຸມປີ 1960 ນີ້ເອງ. ອີກຕົວຢ່າງນຶ່ງກໍຄື ຫໍໄຕວັດສີສະເກດ ໃນສະໄໝເພິ່ນຂະຫຍາຍທາງ ຊຸມປີ 1970 ໄດ້ກິນເອົາເນື້ອທີ່ວັດເຂົ້າໄປຫລາຍ ດັ່ງນັ້ນ ທາງວັດຈຳເປັນຕ້ອງເຮັດຮົ້ວຜ່າເຄິ່ງກາງ ຫໍພຣະໄຕປີດົກ. ເຖິງແມ່ນວ່າ ປີ 1972 ລັດຖະບານລາວ ໄດ້ຮ່ວມງານວາງສະແດງໂລກ ຢູ່ປະເທດຍີ່ປຸ່ນ ໄດ້ເອົາແບບສະຖາປັດຕະຍະກັມຂອງ ຫໍໄຕວັດສີສະເກດນີ້ ໄປຈັດວາງສະແດງ ຈົນໄດ້ຮັບຮາງວັນລະດັບໂລກ. ແຕ່ມາຮອດມື້ນີ້ ຍັງບໍ່ມີຜູ່ໃດຄຶດນຳ ຫໍໄຕວັດສີສະເກດ ເຊິ່ງຢູ່ນອກວັດເຄິ່ງນຶ່ງນັ້ນ ຈະໃຫ້ມີຊາຕາກັມແບບໃດ ໃນອະນາຄົດ ?

ປີ 2000 ທີ່ຜ່ານມາ ໃນງານວາງສະແດງ Expo ຢູ່ປະເທດເຢຍຣະມັນ ລັດຖະບານເຮົາກໍໄດ້ເອົາແບບສິມວັດຊຽງທອງ ເປັນເອກກະລັກຂອງຮ້ານລາວ ເຮັດດ້ວຍໄມ້ເນື້ອແຂງ ສີມືລະອຽດຈົບງາມ.

ນີ້ກໍໄດ້ຮັບຣາງວັນອີກ. ແຕ່ເຖິງປານນັ້ນ ຢູ່ທົ່ວໄປໃນບ້ານເມືອງເຮົາ ກໍຍັງມັກມີຜູ່ຢາກມ້າງເພບູຮານະສະຖານອັນເກົ່າແກ່ ເຊັ່ນວ່າ: ປ່ຽນດິນອໍມຸງແບບພື້ນເມືອງ ມາເປັນແຜ່ນສີມັງ ທຸບດິນຈີ່ ອາຍຸ 3-4 ຮ້ອຍປີ ເພື່ອຈະເທຄອນກຼີດເສີມເຫລັກໃສ່ ດ້ວຍຄຶດວ່າສິ່ງເຫລົ່ານີ້ ຈະໝັ້ນຄົງຖາວອນກວ່າຂອງບູຮານ. ມີການມ້າງຮົ້ວເກົ່າໆ ເຊິ່ງເປັນເສົາໄມ້ແກ່ນຫລ້ອນ ອາຍຸ 100-200 ປີຂຶ້ນໄປ ແລ້ວກໍ່ກໍາແພງສີມັງແທນ ປານກໍາແພງຄຸກ ຫລື ປູສີມັງໃສ່ທົ່ວເດີ່ນວັດ ແທນການປູກຕົ້ນໄມ້ກິນໝາກ ແລະ ດອກໄມ້ພື້ນບ້ານທີ່ສວຍງາມອາດຕາ. ວັດຊຶ່ງຄວນເປັນສູນວັດທະນະທັມ ແລະ ທັມມະຊາດ ຄືສະໄໝບູຮານ ຈໍາຕ້ອງສະຫລາຍຕົວໄປ. ທັງໝົດນັ້ນແມ່ນຄວາມປາດຖະໜາຂອງຊາວບ້ານ ຊາວເມືອງ ທີ່ຢາກໃຫ້ມີການພັດທະນາປ່ຽນແປງ ຢູ່ໃນທ້ອງຖິ່ນຂອງຕົນ ໂດຍເຂົ້າໃຈວ່າ ສິ່ງນັ້ນແມ່ນຄວາມທັນສະໄໝ ແມ່ນຄວາມສີວິໄລ. ນີ້ເປັນຜົນກະທົບທາງດ້ານລົບຂອງການສ້າງສາພັທນາຂອງບ້ານເມືອງ ທຸກຍຸກທຸກສະໄໝ

ແຕ່ໃນດ້ານດີ ປະຊາຊົນຢູ່ຫລາຍທ້ອງຖິ່ນ ຍັງສືບຕໍ່ສ້າງຫໍໄຕຂຶ້ນໃໝ່ ແລະ ຕື່ນຕົວໃນການປົກປັກຮັກສາໜັງສືໃບລານ ເຊັ່ນ: ເມືອງບໍ່ແຕນ ແຂວງໄຊຍະບູລີ, ບ້ານນາຊອນ ເມືອງປາກງື່ມ ນະຄອນຫລວງວຽງຈັນ. ບາງບ່ອນເຮັດຫໍກອງ ແລ້ວກໍເຮັດຫໍໄຕໃສ່ຊັ້ນລຸ່ມ ເພື່ອເປັນການປະຢັດງົບປະມານ, ມີການສ້ອມແປງຕູ້ໃສ່ໃບລານ ຫລືສ້າງຕູ້ໃໝ່ຂຶ້ນ. ຕະຫລອດເວລາຫລາຍປີຜ່ານມາ ພວກເຮົາໄດ້ພົບພໍ້ພະສົງ ແລະ ຊາວບ້ານ ທີ່ແພງພຽນຮັກຫອມໜັງສືໃບລານໃນວັດ ຈົນບໍ່ຍອມໃຫ້ໃຜເຂົ້າເບິ່ງ ແລະ ລະມັດລະວັງ ບໍ່ໃຫ້ຄົນແປກໜ້າ ຢືບຢືມໄປ

ຍ້ອນຄວາມຮັກຫອມຂອງປະຊາຊົນ ໃນການຖ່າຍໄມໂຄຼຟິມ ທາງໂຄງການໄດ້ຍົກຍ້າຍຈັກໄປຖ່າຍກັບທີ່ ພວກເຮົາໄດ້ເດີນທາງໄປຮອດເມືອງສິງ ແຂວງຫລວງນໍ້າທາ, ເມືອງເງິນ ແຂວງໄຊຍະບູລີ ເພື່ອຫລີກລ່ຽງການຢືມເອົາໜັງສືໃບລານ ມາຖ່າຍຢູ່ຈຸດທີ່ຫ່າງໄກຈາກທ້ອງຖິ່ນຜູ່ເປັນເຈົ້າຂອງ ເຖິງວ່າຈະຍາກລໍາບາກປານໃດກໍຕ້ອງລົງໄປ ເພື່ອໃຫ້ປະຊາຊົນມີຄວາມເຊື່ອໝັ້ນ ວ່າເຮົາຈະບໍ່ເຮັດຂອງເພິ່ນຕົກເຮັ່ຽເສຽຫາຍ.

ຊຸມປີ 2002-2004 ແມ່ນລະຍະສຸດທ້າຍຂອງໂຄງການ ໄດ້ຈັດຕັ້ງສູນປົກປັກຮັກສາ 4 ແຫ່ງໃນທົ່ວປະເທດ ຄື ຢູ່ຫລວງພະບາງ ໄດ້ເລືອກເອົາຫໍໄຕ ທັມມາຍານຸສອນ ວັດໃໝ່ສຸວັນນະພູມມາຣາມ ຊຶ່ງມີໜັງສືໃບລານຮອດ 5-6 ພັນຜູກ. ຢູ່ນະຄອນຫລວງ ເລືອກເອົາຫໍໄຕວັດນາຊອນ ເມືອງປາກງື່ມ ເພາະຊາວບ້ານຍັງຮັກສາວັດທະນາທັມການອ່ານ ຂຽນ ແລະ ຟັງທັມມະເທສນາ ຈາກໜັງສືໃບລານ ຢ່າງເປັນຂະບວນ. ທີ່ແຂວງສະຫວັນນະເຂດ ໄດ້ຈັດຕັ້ງສູນຢູ່ວັດໄຊຍະພູມ ບ່ອນທີ່ມີໂຮງຮຽນສົງ ແລະ ທີ່ຈໍາປາສັກ ກໍເລືອກເອົາ

ວັດຫລວງ ຍ້ອນມີໂຮງຮຽນສົງເຊັ່ນດຽວກັນ. ການສ້າງຕັ້ງໃຫ້ເປັນສູນແບບນີ້ ກໍເພື່ອໃຫ້ເປັນແບບຢ່າງແກ່ທ້ອງຖິ່ນ ມີການຝຶກອົບຮົມໃຫ້ພະສົງ ແລະ ຊາວບ້ານທີ່ຢູ່ປະຈຳ ຮູ້ຈັກວິທີວິທະຍາ ສາມາດແນະນຳຕໍ່ຖ້າມີເງື່ອນໄຂກໍລົງໄປທ້ອງຖິ່ນ ໄປຊ່ອຍທາງວັດທີ່ຍັງບໍ່ທັນມີການສຳຫລວດ. ແຕ່ລະສູນ ສາມາດຈັດບຸນປະຈຳປີເປັນຂະບວນແບບຢ່າງ ໃຫ້ຖືການຮັກສາໃບລານເປັນວຽກສຳຄັນຂອງວັດ ແລະ ຊາວບ້ານ. ສົ່ງເສີມໃຫ້ມີການຮຽນກ່າຍ ເທສ ສືບຕໍ່ໄປ, ໂດຍຈັດໃຫ້ມີກິດຈະກຳ ແລະ ວິທີການທີ່ໜ້າສົນໃຈ ສຳຫລັບຄົນຮຸ່ນໃໝ່

ສະຫລຸບແລ້ວ ສຳຫລັບທັງສອງໂຄງການ ຕະຫລອດລະຍະ 15 ປີຜ່ານມາ ໄດ້ສ້າງສະຕິ ແລະຄວາມສົນໃຈໃຫ້ແກ່ປະຊາຊົນຫລາຍຂຶ້ນ ນັບວ່າເປັນໂຄງການທີ່ເຂົ້າເຖິງປະຊາຊົນແທ້.